ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 03 ຫາ 07 ເມສາ 2023



ເມືອງ ວຽງພູຄາ ແຂວງ ຫຼວງນ້ຳທາ ກຽມສົ່ງອອກໝາກໂມ 10 ພັນໂຕນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ເມືອງ ວຽງພູຄາ ແຂວງຫຼວງນ້ຳທາ ກຽມສົ່ງອອກໝາກໂມ 10 ພັນໂຕນ

ບໍລິສັດ ໂຍປັງ ສົ່ງເສີມປູກພືດລະດູແລ້ງ ເປັນບໍລິສັດໜຶ່ງທີ່ສົ່ງເສີມການປູກພືດລະດູແລ້ງ ຢູ່ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ, ຊຶ່ງໄດ້ເລີ່ມແຕ່ປີ 2015 ເປັນຕົ້ນມາ ແລະ ໄດ້ຊຸກຍູ້ສົ່ງເສີມການປູກໝາກໂມເປັນຫຼັກ. ໃນວັນທີ 31 ມີນາ 2023 ນີ້ ທ່ານ ນ. ແສງວອນ ໄຊຍະລີ ປະທານບໍລິສັດ ໂຍປັງສົ່ງເສີມປູກພືດລະດູແລ້ງ ໄດ້ໃຫ້ສຳພາດຕໍ່ກັບທີມງານຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ຮູ້ວ່າ: ບໍລິສັດໄດ້ເລີ່ມລົງທຶນສົ່ງເສີມການປູກໝາກໂມ ຊຶ່ງເປັນໜຶ່ງໃນ 16 ພືດສົ່ງອອກໄປ ສປ ຈີນ ໂດຍໄດ້ເລີ່ມແຕ່ ປີ 2015 ເປັນຕົ້ນມາ. ສຳລັບປີ 2023 ບໍລິສັດໄດ້ລົງທຶນເຊົ່າເນື້ອທີ່ເຮັດການຜະລິດນຳປະຊາຊົນ ພາຍຫຼັງການເກັບກ່ຽວເຂົ້ານາປີສຳເລັດ ໃນເນື້ອທີ່ 300 ກວ່າເຮັກຕາ, ຄາດຄະເນຜົນຜະລິດ 10 ພັນກວ່າໂຕນ ໃນລາຄາ 10 ພັນກີບ/ກິໂລກຼາມ. ປັດຈຸບັນແມ່ນຢູ່ໃນຊວງເກັບກູ້ຜົນຜະລິດເພື່ອກະກຽມສົ່ງອອກໄປ ສປ.ຈີນ.





ທ່ານ ນ. ແສງວອນ ໄຊຍະລີ ປະທານບໍລິສັດ ໂຍປັງ ສົ່ງເສີມປູກພືດລະດູແລ້ງ ໃຫ້ສໍາພາດວ່າ: ການປູກໂມແມ່ນແບ່ງເປັນ 2 ໄລຍະ ຄື: ໄລຍະກະກຽມດິນ 2 ເດືອນ ແລະ ລົງມືປູກ 3 ເດືອນ ໃຊ້ເວລາປະມານ 89-90 ວັນແມ່ນສາມາດເກັບກ່ຽວຜົນຜະລິດ, ຂໍ້ສະດວກການປູກໝາກໂມ ຢູ່ເມືອງວຽງພູຄາ ແມ່ນມີຄວາມສະດວກເລື່ອງແຮງງານ, ການນໍາພັກ-ລັດ ກໍ່ໄດ້ມີການຊຸກຍູ້ສົ່ງເສີມ ແລະ ລົງຢ້ຽມຢາມຢ່າງເປັນປະຈໍາ, ນອກຈາກການປູກໝາກໂມ ຢູ່ ເມືອງ ວຽງພູຄາ ບໍລິສັດ ຍັງໄດ້ສົ່ງເສີມການປູກໝາກແໜ່ງ, ສາລີ, ໝາກເດືອຍ ແລະ ຖົ່ວຂຽວ ຢູ່ ເມືອງ ທົ່ງສາ ແຂວງ ໄຊຍະບູລີ ຕື່ມອີກ, ສະເພາະໝາກໂມໃນປີ 2022 ບໍລິສັດເຮົາມີເນື້ອທີ່ປູກ 100 ກວ່າເຮັກຕາ ຕົກມາປີ 2023 ຂະຫຍາຍເນື້ອທີ່ໄດ້ 300 ກວ່າເຮັກຕາ ເຊິ່ງໄດ້ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນໃນເມືອງວຽງພູຄາ ໃນໄລຍະບໍ່ໄດ້ເຮັດການຜະລິດ, ແຜນການໃນຕໍ່ໜ້າກໍ່ຄືປີ 2024 ຈະ



ທ່ານ ນ. ແສງວອນ ໄຊຍະລີ ປະທານບໍລິສັດ ໂຍປັງ ສົ່ງເສີມປູກພືດລະດູແລ້ງ



ມາຮອດນີ້ ທາງບໍລິສັດມີແຜນຂະຫຍາຍພື້ນທີ່ປູກໃຫ້ໄດ້ 500 ເຮັກຕາ ເພື່ອປູກໝາກໂມ ເພາະວ່າໝາກໂມ ສຳລັບຕະຫຼາດ ສປ ຈີນ ແມ່ນຍັງໄດ້ລາຄາດີ ແລະ ເປັນທີ່ຕ້ອງການຫຼາຍ. ນອກຈາກນີ້, ຕົນເອງຍັງມີຄວາມສົນໃຈໃນດ້ານການແປຮູບຜົນຜະລິດຈາກໝາກແຕ່ຍັງຢູ່ໃນຂັ້ນຕອນການສຶກສາຢູ່, ສຳລັບຜູ້ທີ່ມີຄວາມສົນໃຈໃນການປູກ ແມ່ນແນະນຳໃຫ້ສຶກສາດ້ານການຕະຫຼາດໃຫ້ດີກ່ອນ, ຂັ້ນຕອນເງື່ອນໄຂຂະບວນການສົ່ງອອກ, ເຕັກນິກການປູກ ເພື່ອບໍ່ໃຫ້ຜົນຜະລິດທີ່ອອກມາມີຄຸນນະພາບ ແລະ ບໍ່ໄປຕຳກັບໄລຍະເກັບກູ້ຜົນຜະລິດຂອງປະເທດໃກ້ຄຽງ.

ການລົງທຶນ ຂອງບໍລິສັດດັ່ງກ່າວ ເປັນວຽກງານໜຶ່ງທີ່ໄດ້ປະກອບສ່ວນຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນພາຍໃນເມືອງວຽງພູຄາ ໃຫ້ມີລາຍຮັບເພີ່ມ ໂດຍສະເພາະແມ່ນ ປະຊາຊົນໄດ້ຮັບເງິນຈາກການເຊົ່າເນື້ອທີ່ດິນນາ ພາຍຫຼັງໄດ້ສຳເລັດການເກັບກ່ຽວເຂົ້ານາປີ ປະຊາຊົນບໍ່ໄດ້ເຮັດການຜະລິດ, ມີລາຍຮັບຈາກການເປັນແຮງງານເຮັດວຽກໃນສວນປູກ. ນອກນັ້ນ ຍັງໄດ້ຮັບຜົນປະໂຫຍດຈາກການເຊົ່າເນື້ອທີ່ ຊຶ່ງບໍລິສັດ ໄດ້ທຳການບຸກເບີກດິນສວນ, ສ້ອມແປງເສັ້ນທາງເຂົ້າໄປຫາເນື້ອທີ່ດິນທຳການຜະລິດເຂດຫ່າງໄກສອກຫຼີກ ພ້ອມທັງປັບປຸງພື້ນຖານໂຄງລ່າງ ໃຫ້ມີຄວາມສະດວກໃຫ້ແກ່ປະຊາຊົນພາຍໃນເມືອງນຳອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;